ພຣະບັນຍັດ 10 ປະການ

1. ພວກເຈົ້າຢ່າມີພະອື່ນ ນອກຈາກເຮົາ. 2. ພວກເຈົ້າຢ່າເຮັດຮູບໂຄລົບ. 3. ພວກເຈົ້າຢ່າໃຊ້ພຣະນາມຂອງພຣະຜູ້ເປັນເຈົ້າຂອງເຈົ້າໄປໃນທາງທີ່ຜິດ. 4. ຈົ່ງນັບຖືວັນຊະບາໂຕ. 5. ຈົ່ງນັບຖືບິດາມານດາຂອງເຈົ້າ. 6. ພວກເຈົ້າຢ່າຂ້າຄົນ. 7. ພວກເຈົ້າຢ່າລ່ວງເກີນເມຍຜູ້ອື່ນ. 8. ພວກເຈົ້າຢ່າລັກຊັບ. 9. ພວກເຈົ້າຢ່າຕົວະ. 10. ພວກເຈົ້າຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ. ທ່ານຈະພົບກັບພຣະເຈົ້າໃນວັນພິພາກສາ. ພຣະອົງເຫັນຕັນຫາເປັນເໝືອນການຫຼິ້ນຊູ້, "ຜູ້ໃດເບິ່ງແມ່ຍິງດ້ວຍໃຈກຳໜັດໃນຍິງນັ້ນຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ" (ມັດທາຍ 5:28). ພຣະອົງເຫັນການກຽດຊັງເປັນເໝືອນກັບການຂ້າຄົນ, "ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນກໍເປັນຜູ້ຂ້າຄົນ" (1 ໂຢຮັນ 3:15). ທ່ານຈະໄດ້ໄປສະຫວັນບໍ? ຕໍ່ໄປນີ້ແມ່ນບົດທົດສອບງ່າຍໆ. ທ່ານເຄີຍຕົວະ, ລັກຊັບ, ໃຊ້ພຣະນາມຂອງພຣະເຈົ້າໃນທາງທີ່ຜິດ, ຫຼືເບິ່ງສິ່ງອ້ອມຂ້າງດ້ວຍຕັນຫາບໍ? (ຢາໂກໂບ 2:10) ກ່າວວ່າ "ເພາະວ່າຖ້າບຸກຄົນໃດຖືຮັກສາພຣະບັນຍັດໄດ້ທັງໝົດແຕ່ຜິດຢູ່ຂໍ້ດຽວຜູ້ນັ້ນກໍກາຍເປັນຜູ້ຜິດພຣະບັນຍັດທັງໝົດ." ທ່ານຈະກາຍເປັນຜູ້ຜິດໃນວັນພິພາກສາບໍ? ຖ້າທ່ານໄດ້ເຮັດໃນສິ່ງທີ່ພຣະເຈົ້າເຫັນເປັນການຕົວະ, ການລັກຊັບ, ການດູໝິ່ນພຣະນາມ, ການຫຼິ້ນຊູ້ທາງໃຈ. ພຣະຄຳພີເຕືອນເຮົາວ່າ ຖ້າເຮົາເປັນຄົນເຮັດຜິດ ເຮົາກໍຈະໄປນະລົກ. ພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງມາທົນທຸກແລະສິ້ນພຣະຊົນເທິງໄມ້ກາງແຂນ. ພຣະເຢຊູຮັບການພິພາກສາທັງໝົດໄວ້ທີ່ພຣະອົງ, "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍແຕ່ມີຊີວິດອັນຕະຫຼອດໄປເປັນນິດ" (ໂຢຮັນ 3:16). ຫຼັງຈາກນັ້ນ ພຣະເຢຊູໄດ້ຟື້ນຄືນມາໂດຍເອົາຊະນະຄວາມຕາຍ. ຈົ່ງສາລະພາບຄວາມຜິດບາບອັນນີ້ແລະເຊື່ອໃນພຣະເຢຊູ ແລ້ວພຣະເຈົ້າຈະໃຫ້ຊີວິດອັນຕະຫຼອດໄປເປັນນິດແກ່ທ່ານ. ອ່ານພຣະຄຳພີແລະເຊື່ອຟັງໃນສິ່ງທີ່ທ່ານອ່ານ.

ແຜນການຊົງໄຖ່ຂອງພຣະເຈົ້າ 1

ຄຳຖາມທີ່ສຳຄັນທີ່ສຸດໃນຊີວິດແມ່ນ ທ່ານຈະໄດ້ໄປສະຫວັນບໍ ເມື່ອທ່ານຕາຍ? ພຣະເຈົ້າໄດ້ບອກວ່າ "ທ່ານຈຳເປັນຕ້ອງບັງເກີດມາໃໝ່" ເພື່ອໄປສະຫວັນ (ໂຢຮັນ 3:7). ໃນພຣະຄຳພີ ພຣະເຈົ້າໄດ້ມອບແຜນການການບັງເກີດໃໝ່ອີກຄັ້ງ. ຢ່າງແລກ ທ່ານຕ້ອງສຳນຶກວ່າທ່ານເປັນຄົນບາບ. "ດ້ວຍວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະລັດສະໝີຂອງພຣະເຈົ້າ" (ໂຣມ 3:23). ເພາະວ່າທ່ານເປັນຄົນບາບແລະທ່ານສົມຄວນຕາຍ "ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ" (ໂຣມ 6:23). ສິ່ງນີ້ລວມເຖິງການຕັດຂາດຊົ່ວນິລັນຈາກພຣະເຈົ້າໂດຍຕົກນະລົກ. "ມະນຸດຖືກຊົງກຳນົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວແລະຫລັງຈາກນັ້ນຈະມີການຊົງພິພາກສາສັນໃດ" (ເຮັບເລີ 9:27). ແຕ່ພຣະເຈົ້າຮັກທ່ານຫຼາຍ ຈົນໄດ້ປະທານພຣະບຸດອົງດຽວ ຄືພຣະເຢຊູ ເພື່ອຮັບຄວາມຜິດບາບແລະຕາຍແທນທ່ານ. "ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍຄືຂະນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ" (ໂຣມ 5:8). ເຖິງເຮົາບໍ່ເຂົ້າໃຈໃນວິທີການ ພຣະອົງກ່າວວ່າຄວາມຜິດບາບຂອງເຮົາຖືກມອບໄວ້ໃຫ້ກັບພຣະເຢຊູແລະພຣະອົງໄດ້ຕາຍແທນເຮົາ. "ພຣະອົງຊົງສັ່ງແກ່ມະນຸດທັງປວງໃນທີ່ທຸກບ່ອນໃຫ້ຖິ້ມໃຈເກົ່າເອົາໃຈໃໝ່" (ກິດຈະການ 17:30). ການສາລະພາບຜິດແມ່ນການຫັນຈາກຄວາມຜິດບາບແລະສຳນຶກວ່າຕົນເອງເປັນຄົນບາບແລະພຣະເຢຊູຮັບຄວາມຜິດບາບ, ຕາຍແທນເຮົາ, ຖືກຝັງ, ແລະຖືກຍົກໃຫ້ຟື້ນຈາກຄວາມຕາຍໂດຍພຣະເຈົ້າ. ການຄືນພຣະຊົນຂອງພຣະອົງຢືນຢັນໃຫ້ເຮົາເຫັນວ່າ ພວກເຮົາສາມາດຮັບເອົາຊີວິດອັນຕະຫຼອດໄປເປັນນິດ ເມື່ອໄດ້ຮັບພຣະເຢຊູໃຫ້ເປັນພຣະຜູ້ໄຖ່. "ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ" (ໂຢຮັນ 1:12).

ແຜນການຊົງໄຖ່ຂອງພຣະເຈົ້າ 2

"ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ" (ໂຣມ 10:13). ຈົ່ງເຊື່ອ ແລະທ່ານຈະຮັບຄວາມພົ້ນ. ບໍ່ມີຄຣິດຕະຈັກແຫ່ງໃດຫຼືການເຮັດດີທີ່ສາມາດຊ່ວຍທ່ານໄດ້. ຈົ່ງຈື່ໄວ້ວ່າ ພຣະເຈົ້າເປັນຜູ້ຊ່ວຍ. ແຜນການຊົງໄຖ່ຂອງພຣະເຈົ້າແມ່ນ: ທ່ານເປັນຄົນບາບແລະນອກຈາກທ່ານຈະສຳນຶກຜິດແລະເຊື່ອໃນພຣະເຢຊູຜູ້ທີ່ຕາຍແທນທ່ານ ທ່ານກໍຈະໃຊ້ຊີວິດນິລັນໃນນາລົກ. ຖ້າທ່ານເຊື່ອວ່າພຣະອົງເປັນພຣະຜູ້ຊ່ວຍທີ່ຖືກຂ້າ, ຝັງ ແລະຟື້ນຄືນມາຈາກຕາຍ ທ່ານຈະໄດ້ຮັບການອະໄພໂທດສຳລັບຄວາມຜິດບາບແລະຮັບເອົາຂອງຂວັນແຫ່ງການໄຖ່ຜ່ານທາງຄວາມເຊື່ອ. ຖ້າແຜນການຂອງພຣະອົງບໍ່ຊັດເຈນ ໃຫ້ອ່ານປະໂຫຍກຂ້າງເທິງຊ້ຳແລ້ວຊ້ຳອີກ ຈົນທ່ານເຂົ້າໃຈເຖິງເນື້ອຫາທັງໝົດ. ວິນຍານຂອງທ່ານສຳຄັນກວ່າໂລກ. "ເພາະຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກແຕ່ຕ້ອງເສຍຊີວິດອັນແທ້ຂອງຕົນຜູ້ນັ້ນຈະໄດ້ປະໂຫຍດອັນໃດ" (ມາລະໂກ 8:36). ທ່ານຕ້ອງໝັ້ນໃຈວ່າທ່ານຈະໄດ້ຮັບຄວາມລອດພົ້ນ. ຖ້າທ່ານເສຍວິນຍານ

ຂອງທ່ານ ທ່ານກໍຈະເສຍສະຫວັນແລະທຸກສິ່ງຢ່າງ. ຢ່າເຊື່ອຄວາມຮູ້ສຶກຂອງທ່ານ ເພາະມັນປ່ຽນແປງຕະຫຼອດ. ແຕ່ຈົ່ງຍຶດຖືພຣະສັນຍາທີ່ບໍ່ເຄີຍປ່ຽນແປງ. ຫຼັງຈາກທີ່ທ່ານໄດ້ຮັບຄວາມລອດພົ້ນ, ມີສາມສິ່ງທີ່ທ່ານຄວນປະຕິບັດເພື່ອການເຕີບໂຕຝ່າຍຈິດວິນຍານ. ຢ່າງແລກຄືການອະທິຖານ ຄືການສົນທະນາກັບພຣະເຈົ້າ. ຢ່າງທີ່ສອງຄືການອ່ານພຣະຄໍາພີ ເພື່ອພຣະເຈົ້າຈະສາມາດສົນທະນາກັບທ່ານ. ແລະຢ່າງສຸດທ້າຍຄືການແບ່ງປັນຄວາມເຊື່ອກັບຄົນອື່ນ ເພື່ອທ່ານຈະສາມາດສົນທະນາສໍາລັບພຣະເຈົ້າ. “ເຫດສັນນັ້ນຢ່າລະອາຍທີ່ຈະເປັນພະຍານຝ່າຍອົງພຣະຜູ້ເປັນເຈົ້າ” (2 ຕີໂມທຽວ 1:8). “ດັ່ງນັ້ນທຸກຄົນທີ່ຈະຮັບເຮົາຕໍ່ໜ້າມະນຸດຝ່າຍເຮົາຈະຮັບຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນເໝືອນກັນ” (ມັດທາຍ 10:32). ທ່ານຄວນໄດ້ຮັບບັບຕິດສະມາເພື່ອເປັນການເຊື່ອຟັງພຣະເຢຊູຄຣິດ, ເປັນການກ່າວພະຍານເຖິງຄວາມລອດພົ້ນຂອງທ່ານໃນສະຖານທີ່ສາທາລະນະ, ແລະເຂົ້າຮ່ວມສາມັກຄີທໍາກັບຄຣິດຕະຈັກ.

ພຣະຄໍາຂອງພຣະເຈົ້າ 1

ທ່ານຕ້ອງໄດ້ຮັບຄວາມລອດພົ້ນ “ເຮົາບອກທ່ານຕາມຄວາມຈິງວ່າຖ້າຜູ້ໃດບໍ່ບັງເກີດມາໃໝ່ຜູ້ນັ້ນຈະເຫັນລາຊະແຜ່ນດິນຂອງພຣະເຈົ້າບໍ່ໄດ້” (ໂຢຮັນ 3:3). ເຮົາທັງໝົດເປັນເໝືອນແກະທີ່ສູນເສຍແລ້ວ. ເຮົາທຸກຄົນຕ່າງດໍາເນີນໄປຕາມທາງຂອງໃຜລາວ (ເອຊາຢາ 53:6). ເຮົາຄືພຣະຜູ້ເປັນເຈົ້າກວດຄົ້ນເບິ່ງຈິດແລະທົດລອງເບິ່ງໃຈເພື່ອໃຫ້ແກ່ທຸກຄົນຕາມການປະພຶດຂອງເຂົາຕາມຜົນແຫ່ງການກະທໍາຂອງພວກເຂົາ (ເຢເລມີຢາ 17:10). ພວກທ່ານໝົດທຸກຄົນບໍ່ຖິ້ມໃຈເກົ່າເອົາໃຈໃໝ່ກໍຈະຈິບຫາຍໄປເໝືອນກັນ (ລູກາ 13:3). ພຣະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນບໍ່ແມ່ນຍ້ອນກິດຈະການທີ່ຊອບທໍາທີ່ພວກເຮົາເອງໄດ້ເຮັດແຕ່ພຣະອົງໄດ້ຊົງພຣະກະລຸນາຊໍາລະໃຫ້ພວກເຮົາມີໃຈບັງເກີດໃໝ່ແລະຊົງສ້າງພວກເຮົາຂຶ້ນໃໝ່ໂດຍພຣະວິນຍານບໍລິສຸດ (ຕີໂຕ 3:5). ມີທາງໜຶ່ງຊຶ່ງຄົນເຮົາເບິ່ງວ່າຖືກຕ້ອງແຕ່ມັນສິ້ນສຸດລົງທີ່ທາງຂອງຄວາມຕາຍ (ສຸພາສິດ 14:12). ພຣະເຢຊູຊົງຕອບລາວວ່າ, “ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ,ແລະເປັນຊີວິດບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ (ໂຢຮັນ 14:6). ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຜູ້ຊອບທໍາດ້ວຍການເຮັດຕາມພຣະບັນຍັດ. ມັນໄດ້ບອກເຮົາຢ່າງຊັດເຈນວ່າ ເຮົາເປັນຄົນບາບ (ໂລມ 3:20). ພຣະເຈົ້າໄດ້ຈັັດຕຽມພຣະເຢຊູເພື່ອຄວາມລອດພົ້ນຂອງທ່ານແລະແບກຄວາມຜິດບາບຂອງເຮົາໄປທີ່ກາງແຂນ ເພື່ອພວກເຮົາຈະໄດ້ຕາຍໃນຄວາມບາບແລະຢູ່ອາໄສໃນສິ່ງທີ່ຖືກຕ້ອງ. ໂດຍຜ່ານບາດແຜຂອງພຣະອົງ ເຮົາໄດ້ຮັບການຍຽວຢາ (1 ເປໂຕ 2:24). ພຣະຄຣິດໄດ້ຕາຍເພື່ອຄວາມບາບ. ພຣະເຢຊູຖືກຝັງແລະຟື້ນຄືນມາຈາກຄວາມຕາຍໃນວັນທີສາມ (1 ໂກລິນໂທ 15:3-4). ພຣະເຈົ້າຊ່ອຍທ່ານໃຫ້ລອດພົ້ນໂດຍພຣະຄຸນດ້ວຍທາງຄວາມເຊື່ອ. ທ່ານບໍ່ສາມາດເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້. ອານພົ້ນນັ້ນບໍ່ແມ່ນມີມາຍ້ອນການປະຕິບັດເພື່ອບໍ່ໃຫ້ຄົນໜຶ່ງຄົນໃດອວດໄດ້ (ເອເຟໂຊ 2:8-9).

ພຣະຄໍາຂອງພຣະເຈົ້າ 2

ພຣະເຢຊູບອກພວກເຂົາວ່າ ເຊື່ອໃນພຣະຄໍາຂອງພຣະເຈົ້າແລະຈະໄດ້ຮັບຄວາມລອດ “ນີ້ແຫລະ, ແມ່ນກິດຈະການຂອງພຣະເຈົ້າຄືການທີ່ທ່ານທັງຫລາຍວາງໃຈໃນທ່ານທີ່ພຣະອົງຊົງໃຊ້ມາ” (ໂຢຮັນ 6:29). “ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າຖ້າຜູ້ໃດຟັງຄໍາຂອງເຮົາແລະວາງໃຈໃນພຣະອົງຜູ້ຊົງໃຊ້ເຮົາມາຜູ້ນັ້ນກໍມີຊີວິດອັນຕະຫລອດໄປເປັນນິດແລະບໍ່ເຂົ້າໃນການພິພາກສາແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ” (ໂຢຮັນ 5:24). ຜູ້ທີ່ມີພຣະບຸດກໍມີຊີວິດຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີວິດ. ຂໍ້ຄວາມເຫລົ່ານີ້ເຮົາຂຽນມາເຖິງເຈົ້າທັງຫລາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕະຫລອດໄປເປັນນິດ (1 ໂຢຮັນ 5:12-13). ດ້ວຍວ່າຖ້າຜູ້ໃດມີຄວາມລະອາຍເພາະເຮົາແລະເພາະຖ້ອຍຄໍາຂອງເຮົາບຸດມະນຸດກໍຈະມີຄວາມລະອາຍເພາະຜູ້ນັ້ນ (ລູກາ 9:26). ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, “ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ” ແລະເຊື່ອໃນຈິດໃຈວ່າພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ. ເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນຈຶ່ງໄດ້ຊົງຖືວ່າເປັນຄົນຊອບທໍາແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກຈຶ່ງຖືກຊົງໂຜດໃຫ້ພົ້ນ (ໂລມ 10:9-10). ຖ້າຜູ້ໃດຈະເວົ້າວ່າຕົນມີຄວາມເຊື່ອແຕ່ບໍ່ມີການປະຕິບັດຈະໄດ້ປະໂຫຍດອັນໃດຄວາມເຊື່ອນັ້ນອາດຈະໃຫ້ຕົນພົ້ນໄດ້ຫລື? (ຢາໂກໂບ 2:14). ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທໍາການຢູ່ພາຍໃນເຈົ້າທັງຫລາຍໃຫ້ມີໃຈປາດຖະໜາແລະໃຫ້ເຮັດໄປເພື່ອຊອບພຣະໄທຂອງພຣະອົງ (ຟີລິບປອຍ 2:13). ດັ່ງນັ້ນເຮົາທຸກຄົນຈະຕ້ອງກາບທູນເລື່ອງລາວຂອງຕົນເອງຕໍ່ພຣະເຈົ້າ (ໂລມ 14:12). ຖ້າທ່ານປະຕິເສດທີ່ຈະຮັບໃຊ້ພຣະເຈົ້າແລ້ວຈຶ່ງຕັດສິນໃຈມື້ນີ້ວ່າພວກທ່ານຈະຮັບໃຊ້ຜູ້ໃດ, ແຕ່ວ່າຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ” (ໂຢຊວຍ 24:15).